ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 744 /ກຄທ

ນະຄອນຫລວງວຽງຈັນ, ວັນທີ 28 ສິງຫາ 2017

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ການປັບປຸງຜະລິດຕະພັນ ແລະ ການບໍລິການຂໍ້ມູນຂອງລູກຄ້າ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 928/ທຫລ, ລົງວັນທີ 20/09/2012,

ເພື່ອຮັບປະກັນໃຫ້ການສະໜອງຜະລິດຕະພັນຂອງທະນາຄານທຸລະກິດ ມີຄວາມສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ແນໃສ່ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ແລະ ຊ່ວຍຫຼຸດຜ່ອນຄວາມສ່ຽງຂອງທະນາຄານທຸລະກິດ, ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ການປັບປຸງ ຫຼື ການປ່ຽນແປງຜະລິດຕະພັນ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໄປແລ້ວນັ້ນ ທະນາຄານຕ້ອງສະເໜີຂໍອະນຸຍາດການປັບປຸງ ຫຼື ການປ່ຽນແປງດັ່ງກ່າວຈາກທະນາຄານແຫ່ງ ສປປ ລາວ;
2. ການບໍລິການຂໍ້ມູນຂອງລູກຄ້າໃຫ້ກັບບຸກຄົນ ແລະ ນິຕິບຸກຄົນອື່ນ ນອກຈາກທີ່ກຳນົດໄວ້ໃນກົດໝາຍ, ບໍ່ວ່າດ້ວຍຮູບການໃດກໍຕາມ ຕ້ອງໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນຈາກລູກຄ້າທີ່ກ່ຽວຂ້ອງ. ໃນນັ້ນ, ການບໍລິການຂໍ້ມູນສິນເຊື່ອ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
3. ໃນການເຊື່ອມຕໍ່ລະບົບຂໍ້ມູນກັບພາກສ່ວນອື່ນ, ທະນາຄານ ຕ້ອງຮັບປະກັນຄວາມປອດໄພ ແລະ ຄວາມສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການຮັກສາຄວາມລັບ, ລະບົບຮັກສາຄວາມປອດໄພ ແລະ ວຽກງານຕ້ານ, ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມ

ພຸດທະໄຊ ສີວິໄລ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**

ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**